ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການກວດກາແຫ່ງລັດ ເລກທີ 392/ອກຫລ.

ນະຄອນຫຼວງວຽງຈັນ, ລົງວັນທີ 07 ພະຈິກ 2023.

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງອົງການກວດກາລັດແຂວງ, ນະຄອນຫຼວງ

- ອີງຕາມ ກົດໝາຍວ່າດ້ວຍການກວດກາລັດ(ສະບັບປັບປຸງ) ເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ເລກທີ 17/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ລັດຖະດຳລັດ ຂອງປະທານປະເທດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາແຫ່ງລັດ ເລກທີ 141/ປປທ, ລົງວັນທີ 28 ກັນຍາ 2023;

## ປະທານ ອົງການກວດກາແຫ່ງລັດ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງອົງການກວດກາລັດແຂວງ, ນະຄອນຫຼວງ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ແນ່ໃສ່ເຮັດໃຫ້ວຽກງານຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ.**

ອົງການກວດກາລັດແຂວງ, ນະຄອນຫຼວງ ຂຽນເປັນຕົວອັກສອນຫຍໍ້ວ່າ(ອກລຂ.....,ອກລ....) ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງແຂວງ, ນະຄອນຫຼວງ ມີພາລະບົດບາດ ເປັນເສນາທິການໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການກວດກາແຫ່ງລັດ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຕາມຂອບເຂດສິດ, ໜ້າທີ່ຂອງຕົນ ແລະ ນຳພາ-ຊີ້ນຳ ອົງການກວດກາລັດຂັ້ນເມືອງ, ອົງການກວດກາລັດຂອງພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່.**

ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ມີໜ້າທີ່ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມວຽກງານກວດກາລັດທົ່ວປະເທດ, ມະຕິກອງປະຊຸມຂອງສະພາປະຊາຊົນແຂວງ, ນະຄອນຫຼວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຄົ້ນຄວ້າ ຄຳສັ່ງ, ຂໍ້ກຳນົດ, ຄຳແນະນຳ, ຂໍ້ຕົກລົງ, ແຈ້ງການກ່ຽວກັບວຽກງານພະນັກງານ-ລັດຖະກອນ, ການປັບປຸງພາລະບົດບາດ, ກົງຈັກການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ ທີ່ຂັ້ນເທິງວາງອອກ;
3. ຜັນຂະຫຍາຍ ແຜນຍຸດທະສາດ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຂອງອົງການກວດກາແຫ່ງລັດ, ອົງການປົກຄອງແຂວງ, ນະຄອນຫຼວງ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດ;
4. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາຄຳສະເໜີ ຕາມຂອບເຂດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ;
6. ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ, ຫ້ອງການຂັ້ນເມືອງ ແລະ ອົງການຈັດຕັ້ງອື່ນ ທີ່ນຳໃຊ້ງົບປະມານ ຂອງລັດ;
7. ກວດກາ ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຫົວໜ້າພະແນກການ, ຫົວໜ້າອົງການ ຂັ້ນແຂວງ, ເຈົ້າເມືອງ, ເຈົ້ານະຄອນ, ຮອງຫົວໜ້າພະແນກການ, ຮອງຫົວໜ້າອົງການຂັ້ນແຂວງ, ຮອງເຈົ້າເມືອງ, ຮອງເຈົ້ານະຄອນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ຂັ້ນແຂວງ ຄຸ້ມຄອງ;
8. ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍພະແນກການຂັ້ນແຂວງ ແລະ ຂອງຫຼາຍເມືອງ, ນະຄອນ ທີ່ຂຶ້ນກັບອົງການປົກຄອງຂັ້ນແຂວງ;
9. ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດຳເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ;
11. ກວດກາ ຜົນການກວດສອບ, ຕາມມະຕິກອງປະຊຸມຂອງສະພາປະຊາຊົນແຂວງ, ນະຄອນຫຼວງ ຫຼື ຕາມການສະເໜີ ຂອງອົງການກວດສອບປະຈຳພາກ ແລະ ຕາມການມອບໝາຍ ຂອງປະທານອົງການກວດກາແຫ່ງລັດ;
12. ກວດກາ ໂຄງການລົງທຶນຂອງລັດ ທີ່ແຂວງ, ນະຄອນຫຼວງ ຄຸ້ມຄອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;
13. ກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ ຂອງພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ, ຫ້ອງການຂັ້ນເມືອງ ແລະ ຕິດຕາມ, ຊຸກຍູ້ ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ;
14. ກວດກາ ການຈັດຕັ້ງຂອງພະແນກການຂັ້ນແຂວງ, ຫ້ອງການຂັ້ນເມືອງ, ຄະນະເລຂາທິການ, ຄະນະກຳມະການຂອງສະພາປະຊາຊົນແຂວງ, ນະຄອນຫຼວງ ເມື່ອມີປາກົດການລະເມີດກົດໝາຍ ແລະ ມະຕິກອງປະຊຸມຂອງສະພາປະຊາຊົນແຂວງ, ນະຄອນຫຼວງ;
15. ກວດກາ ການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ລັດໃນການເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທຳໃນອາຊີບ ຊຶ່ງພາໃຫ້ເກີດຜົນເສຍຫາຍແກ່ຊັບສິນຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງ;

16. ກວດກາການແຈ້ງຊັບສິນ ແລະ ລາຍຮັບ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ ທີ່ຂຶ້ນກັບແຂວງ, ນະຄອນຫຼວງຄຸ້ມຄອງ;
17. ສ້າງແຜນການ ແລະ ສະເໜີຫາປະທານ ອົງການກວດກາແຫ່ງລັດ ຈັດຝຶກອົບຮົມວຽກງານກວດກາໃຫ້ພະນັກງານກວດກາອາຊີບ ຂອງອົງການກວດກາລັດຂັ້ນແຂວງ, ຂັ້ນເມືອງ ແລະ ພະແນກການຂັ້ນແຂວງ;
18. ຄົ້ນຄວ້າ, ຕິດຕາມ ການປະເມີນຜົນການຈັດຕັ້ງປະຕິບັດວຽກງານ ແລະ ການຍ້ອງຍໍ ປະຈຳປີ, 05 ປີ ແລະ ຍ້ອງຍໍອື່ນໆ ໃຫ້ພະນັກງານ-ລັດຖະກອນ ພາຍໃນອົງການກວດກາລັດ ຂັ້ນແຂວງ ແລະ ຜູ້ເຂົ້າຮ່ວມວຽກງານກວດກາ;
19. ສ້າງ, ບຳລຸງ, ຍົກລະດັບ ແລະ ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນພາຍໃນອົງການກວດກາລັດແຂວງ, ນະຄອນຫຼວງ;
20. ພົວພັນ ແລະ ປະສານສົມທົບ ກັບອົງການຈັດຕັ້ງຂອງລັດ ຂັ້ນແຂວງ, ຂັ້ນເມືອງ, ອົງການກວດສອບປະຈຳພາກ ແລະ ກວດສອບເອກະລາດ ກ່ຽວກັບການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
21. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມການເຫັນດີ, ມອບໝາຍ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
22. ສະຫຼຸບ ແລະ ລາຍງານ ຜົນຂອງການກວດກາ, ແຜນການປະຈຳປີ, 05 ປີ ແລະ ການເຄື່ອນໄຫວວຽກງານກວດກາ ຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຄະນະປະຈຳສະພາປະຊາຊົນແຂວງ, ນະຄອນຫຼວງ ແລະ ປະທານ ອົງການກວດກາແຫ່ງລັດ ຢ່າງເປັນປົກກະຕິ;
23. ຄຸ້ມຄອງ, ບໍລິຫານ, ປົກປັກຮັກສາ ພາຫະນະ, ວັດຖຸອຸປະກອນ ແລະ ຊັບສິນອື່ນໆ ທີ່ຂຶ້ນກັບການຄຸ້ມຄອງຂອງອົງການກວດກາລັດແຂວງ, ນະຄອນຫຼວງ;
24. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ.**

ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ມີຂອບເຂດສິດດັ່ງນີ້:

1. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ, ແກ້ໄຂຄຳສະເໜີຂອງພົນລະເມືອງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳໃຕ້ກົດໝາຍອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບກົດໝາຍ ແລະ ລະບຽບການຂອງອົງການກວດກາລັດຂັ້ນເທິງ;
3. ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໂຈະ ຫຼື ຍົກເລີກ ນິຕິກຳຂອງພະແນກການຂັ້ນແຂວງ ຫຼື ອົງການປົກຄອງຂັ້ນເມືອງ ທີ່ຂັດກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;
4. ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ ແລະ ຫົວໜ້າພະແນກການ ຂັ້ນແຂວງ ພິຈາລະນາແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອດຳເນີນການກວດກາ;
5. ສະເໜີ ຄະນະປະຈຳສະພາປະຊາຊົນແຂວງ, ນະຄອນຫຼວງ ລົງມະຕິບໍ່ໄວ້ວາງໃຈ ຕໍ່ບຸກຄະລາກອນທີ່ສະພາປະຊາຊົນແຂວງ, ນະຄອນຫຼວງ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ເມື່ອມີປາກົດການລະເມີດກົດໝາຍ;

6. ສະເໜີ ສະພາປະຊາຊົນແຂວງ, ນະຄອນຫຼວງ ຕົກລົງດຳເນີນການກວດກາຕໍ່ບຸກຄົນ ທີ່ສະພາປະຊາຊົນແຂວງ, ນະຄອນຫຼວງ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ, ຕໍ່ບຸກຄົນ ພະນັກງານຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນຫຼວງ ແລະ ເຂດ ເມື່ອມີປາກົດການລະເມີດກົດໝາຍ;
7. ສະເໜີ ໂຈະຊົ່ວຄາວ ການແຕ່ງຕັ້ງ, ສັບຊ້ອນ, ການຍົກຍ້າຍ, ສັບປ່ຽນ ຫຼື ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ແມ່ນເປົ້າໝາຍກວດກາໃນໄລຍະເວລາດຳເນີນການກວດກາ ຫຼື ດຳເນີນການສືບສວນ-ສອບສວນບໍ່ທັນສຳເລັດ ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ສະເໜີ ພະແນກການຂັ້ນແຂວງ, ຄະນະເລຂາທິການ, ຄະນະກຳມະການ ຂອງສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນຂອງການກວດກາ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;
9. ສະເໜີ ມາດຕະການແກ້ໄຂຜົນຂອງການກວດກາ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ແລະ ອົງການກວດກາແຫ່ງລັດ;
10. ສະເໜີ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີບໍ່ພິຈາລະນາ ຫຼື ພິຈາລະນາແລ້ວແຕ່ເຫັນວ່າບໍ່ຖືກຕ້ອງ ມີສິດລາຍງານຕໍ່ ປະທານ ອົງການກວດກາແຫ່ງລັດ ເພື່ອພິຈາລະນາຕົກລົງ;
11. ສະເໜີ ໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນບັນຫາທີ່ບໍ່ເປັນເອກະພາບ ກ່ຽວກັບການແກ້ໄຂຜົນຂອງການກວດກາ ລະຫວ່າງປະທານອົງການກວດກາລັດແຂວງ, ນະຄອນຫຼວງ ກັບຫົວໜ້າພະແນກການຂັ້ນແຂວງ, ນະຄອນຫຼວງ, ເຈົ້າເມືອງ, ເຈົ້ານະຄອນ ໃນກໍລະນີທີ່ບໍ່ພິຈາລະນາຄືນ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ມີສິດລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາຕົກລົງ;
12. ອອກຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
13. ສະເໜີ ໃຫ້ອົງການທີ່ກ່ຽວຂ້ອງຂັ້ນແຂວງ ປະຕິບັດມາດຕະການຕໍ່ຜູ້ກະທຳຜິດ ຕາມກົດໝາຍ ທີ່ມີສ່ວນພົວພັນກັບຜົນຂອງການກວດກາ;
14. ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ສະພາປະຊາຊົນແຂວງ, ນະຄອນຫຼວງ ຍົກຍ້າຍ, ລົງວິໄນ ຫຼື ດຳເນີນຄະດີຕໍ່ຫົວໜ້າອົງການຈັດຕັ້ງຂອງເປົ້າໝາຍ ທີ່ຖືກກວດກາ ທີ່ບໍ່ແກ້ໄຂຜົນຂອງການກວດກາ ຫຼື ແກ້ໄຂບໍ່ຖືກຕາມການຕົກລົງຂອງຂັ້ນເທິງ, ລວມທັງແກ້ໄຂ ໃນກໍລະນີມີການພົວພັນເຖິງຜົນປະໂຫຍດ ແລະ ຄວາມຮັບຜິດຊອບຂອງຫົວໜ້າອົງການຈັດຕັ້ງດັ່ງກ່າວ ຕາມກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ ປີ 2022), ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ(ສະບັບປັບປຸງ) ແລະ ກົດໝາຍທີ່ກ່ຽວຂ້ອງ;
15. ສະເໜີ ພະແນກການຂັ້ນແຂວງ, ນະຄອນຫຼວງ, ຄະນະເລຂາທິການ, ຄະນະກຳມະການ ຂອງສະພາປະຊາຊົນແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນຂອງການກວດກາ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;
16. ປະທານ, ຮອງປະທານ ຫຼື ຜູ້ຕາງໜ້າອົງການກວດກາລັດແຂວງ, ນະຄອນຫຼວງ ມີສິດເຂົ້າຮ່ວມຕິດຕາມກອງປະຊຸມສາມັນ ແລະ ວິສາມັນ ຂອງອົງການປົກຄອງແຂວງ, ນະຄອນຫຼວງ;

17. ພົວພັນ ແລະ ປະສານສົມທົບ ກັບບັນດາອົງການຈັດຕັ້ງແຂວງ, ນະຄອນຫຼວງ ແລະ ຂັ້ນເມືອງ ທີ່ຮັບຜິດຊອບກ່ຽວກັບພົນຂອງການກວດສອບ ເພື່ອດຳເນີນການກວດກາ ແລະ ແກ້ໄຂພົນຂອງການກວດກາ ຕາມພົນຂອງການກວດສອບ ແລະ ຕາມພາລະບົດບາດຂອງຕົນ;
18. ປະຕິບັດສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ.**

ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ມີໂຄງປະກອບກົງຈັກດັ່ງນີ້:

1. ຫ້ອງການຄົ້ນຄວ້າ-ສັງລວມ;
2. ຂະແໜງກວດກາລັດ;
3. ຂະແໜງຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ;
4. ຂະແໜງຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ.**

ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ປະກອບມີ: ປະທານ ຈຳນວນ 01 ທ່ານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານ ອົງການກວດກາແຫ່ງລັດ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງທີ່ກອງປະຊຸມສະພາປະຊາຊົນແຂວງ, ນະຄອນຫຼວງວຽງຈັນ ພິຈາລະນາຮັບຮອງ.

   ປະທານ ອົງການກວດກາລັດແຂວງ, ນະຄອນຫຼວງ ມີຄວາມຮັບຜິດຊອບຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການກວດກາແຫ່ງລັດ ກ່ຽວກັບພົນສຳເລັດ ແລະ ຂໍ້ບົກຜ່ອງໃນການຈັດຕັ້ງພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ. ໃນເວລາຕິດຂັດ ປະທານ ອົງການກວດກາລັດແຂວງ, ນະຄອນຫຼວງ ຕ້ອງມອບສິດໃຫ້ ຮອງປະທານ ທ່ານໃດໜຶ່ງຮັກສາການແທນ.
2. ຮອງປະທານ ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ຈຳນວນໜຶ່ງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານ ອົງການກວດກາແຫ່ງລັດ ຕາມການສະເໜີຂອງ ປະທານ ອົງການກວດກາລັດແຂວງ, ນະຄອນຫຼວງ ບົນພື້ນຖານການເຫັນດີ ເປັນເອກະພາບກັບ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ;

   ຮອງປະທານ ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ມີ ສິດ ແລະ ໜ້າທີ່ ຊ່ວຍປະທານ ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີທີ່ປະທານບໍ່ຢູ່ ຫຼື ຕິດຂັດ ຮອງປະທານຜູ້ທີ່ໄດ້ຮັບມອບໝາຍຈາກປະທານ ເປັນຜູ້ຮັກສາການແທນ.
3. ຫົວໜ້າ, ຮອງຫົວໜ້າຫ້ອງການ, ຫົວໜ້າ, ຮອງຫົວໜ້າຂະແໜງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ຕາມການສະເໜີຂອງ ປະທານ ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ.

   ສຳລັບ ສິດ ແລະ ໜ້າທີ່ຂອງ ຫົວໜ້າ, ຮອງຫົວໜ້າຫ້ອງການ, ຫົວໜ້າ, ຮອງຫົວໜ້າຂະແໜງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ.**

ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ເຄື່ອນໄຫວຕາມຫຼັກການດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ;
2. ປະຕິບັດລະບອບຫົວໜ້າດຽວ, ຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ໃນທຸກລະດັບ;
3. ທຸກການເຄື່ອນໄຫວ ຂອງອົງການກວດກາລັດແຂວງ, ນະຄອນຫຼວງ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 8 ແບບແຜນວິທີເຮັດວຽກ.**

ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ມີແບບແຜນວິທີເຮັດວຽກດັ່ງນີ້:

1. ທຸກການເຄື່ອນໄຫວວຽກງານ ຂອງອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ແມ່ນອີງໃສ່ຫຼັກການລວມຂອງພັກ-ລັດ ແລະ ລະບຽບການຂອງແຂວງ, ນະຄອນຫຼວງວຽງຈັນ;
2. ເຮັດວຽກມີແຜນການ, ແຜນງານ, ໂຄງການລະອຽດ ແລະ ມີກຳນົດເວລາ;
3. ປະຕິບັດລະບອບລາຍງານ, ຂໍຄຳເຫັນຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານອົງການກວດກາແຫ່ງລັດ ເປັນປົກກະຕິ; ກໍລະນີມີບັນຫາຮີບດ່ວນ ກໍ່ຕ້ອງໄດ້ລາຍງານຂໍທິດຊີ້ນຳຈາກຂັ້ນເທິງ ໃຫ້ທັນເວລາ;
4. ປະຕິບັດລະບອບດຳເນີນຊີວິດການເມືອງເປັນປົກກະຕິ, ດຳເນີນກອງປະຊຸມວຽກງານກວດກາທົ່ວແຂວງ, ນະຄອນຫຼວງວຽງຈັນ ປີລະເທື່ອ ແລະ ຮັບສ່ອງແສງວຽກງານກວດກາຈາກຂັ້ນລຸ່ມເປັນປົກກະຕິ;
5. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານປະຈຳເດືອນ, 03 ເດືອນ, 06 ເດືອນ, 01 ປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ເກັບກຳສະພາບລວມ ແລະ ສະເພາະດ້ານໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ, ສັງລວມລາຍງານ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ອົງການກວດກາແຫ່ງລັດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ.**

1. ອົງການກວດກາລັດ ແຂວງ, ນະຄອນຫຼວງວຽງຈັນ ມີງົບປະມານຮ່ວມກັບຄະນະກວດກາພັກ ແຂວງ, ນະຄອນຫຼວງວຽງຈັນ ແລະ ມີງົບປະມານສະເພາະສຳລັບການກວດກາຕາມມະຕິກອງປະຊຸມສະພາປະຊາຊົນແຂວງ, ນະຄອນຫຼວງວຽງຈັນ, ຕາມຄຳສັ່ງ ແລະ ກວດກາຕາມຜົນການກວດສອບ;
2. ອົງການກວດກາລັດແຂວງ, ນະຄອນຫຼວງວຽງຈັນ ມີຕາປະທັບຂອງຕົນ ເພື່ອຮັບໃຊ້ເຂົ້າໃນວຽກງານລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ ປະທານອົງການກວດກາລັດແຂວງ, ນະຄອນຫຼວງ ອອກຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການ ແລະ ບັນດາຂະແໜງການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງ ຂໍ້ຕົກ ລົງສະບັບນີ້ ໃຫ້ລະອຽດຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ແກ່ການເຄື່ອນໄຫວວຽກ ງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ.**

ອົງການກວດກາລັດແຂວງ, ນະຄອນຫຼວງ, ບັນດາພະແນກການຂອງແຂວງ, ນະຄອນຫຼວງ, ພາກ ສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃນຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ວ່າ ດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 29/ອກຫລ, ລົງວັນທີ 24 ກຸມພາ 2022.

**ປະທານ ອົງການກວດກາແຫ່ງລັດ**

ອົງການກວດກາແຫ່ງລັດ
ປະທານ

**ຄຳພັນ ພົມມະທັດ**